ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກົມຮ່ວມມືສາກົນ ທຫລ ຈັດຝຶກອົບຮົມ
# ເຕັກນິກການເຈລະຈາ ແລະ ວຽກງານການຄົ້ນຄວ້າ




ໃນລະຫວ່າງວັນທີ 25-27 ພຶດສະພາ 2022 ຜ່ານມານີ້, ກົມຮ່ວມມືສາກົນ, ທະນາຄານແຫ່ງ ສປປ ລາວ ໄດ້ຈັດຝຶກອົບຮົມໃນຫົວຂໍ້: “ເຕັກນິກການເຈລະຈາ” ແລະ “ວຽກງານການຄົ້ນຄວ້າຂຶ້ນ” ໂດຍການໃຫ້ກຽດເປັນປະທານຮ່ວມຂອງທ່ານ ສົມປະສົງ ພົມມະສານ ຮອງຫົວໜ້າກົມ ຮ່ວມມືສາກົນ, ແລະ ປອ ລາວຣົວ ເຈີຈົງ ພະນັກງານບໍານານ ຂອງສະພາທິດສະດີສູນກາງພັກ; ອະດີດຫົວໜ້າກົມ, ກະຊວງອຸດສາຫະກໍາ ແລະ ການຄ້າ ພ້ອມທັງໃຫ້ກຽດບັນຍາຍໃນການຝຶກອົບຮົມໃນຄັ້ງນີ້, ມີບັນດາຄະນະກົມ, ຄະນະພະແນກ ແລະ ພະນັກງານຈາກກົມພາຍ ທຫລ ເຂົ້າຮ່ວມພ້ອມພຽງ.




ຈຸດປະສົງຂອງການຈັດຝຶກອົບຮົມໃນຄັ້ງນີ້, ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານເຕັກນິກການເຈລະຈາ ແລະ ວຽກງານການຄົ້ນຄວ້າ ໃນຂະແໜງເສດຖະກິດ, ຂະແໜງການເງິນ-ເງິນຕາ ແລະ ເພື່ອຍົກສູງຄວາມເຂົ້າໃຈ, ຄວາມຮັບຮູ້-ຄວາມສາມາດ ທັກສະກ່ຽວກັບເຕັກນິກການເຈລະຈາ ໃນການໝູນໃຊ້ເຂົ້າສູ່ການຈັດຕັ້ງການເຈລະຈາກັບຄູ່ຮ່ວມມືສາກົນ, ເພື່ອສ້າງທັກສະກ່ຽວກັບການຄົ້ນຄວ້າດ້ານນະໂຍບາຍ ແລະ ການຕິດຕາມສະພາບການດ້ານເສດຖະກິດຂອງບັນດາປະເທດໃນພາກພື້ນ-ສາກົນໃນຂະແໜງການເງິນ-ທະນາຄານ ໃນນີ້, ການເຂົ້າເຖິງແຫຼ່ງຂໍ້ມູນທີ່ໜ້າເຊື່ອຖື ແລະ ເຕັກນິກວິທີການຂຽນບົດລາຍງານຄົ້ນຄວ້າໃຫ້ມີເນື້ອໃນກະທັດຮັດ ແລະ ເລິກເຊິ່ງ.

ການສໍາມະນາໄດ້ດໍາເນີນໄປດ້ວຍບັນຍາກາດຟົດຟື້ນ ໂດຍມີການແລກປ່ຽນຄໍາຄິດ-ຄໍາເຫັນຈາກຜູ້ເຂົ້າຮ່ວມ. ເຮັດໃຫ້ການຝຶກອົບຮົມໃນຄັ້ງນີ້, ບັນລຸຕາມເປົ້າໝາຍທີ່ວາງໄວ້.

ຂ່າວ-ພາບ: ທ ສົມພິດ ທໍາມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*